ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0903/ອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 20 MAY 2013

# ຂໍ້ຕົກລົງ

## ວ່າດ້ວຍຕະຫຼາດ

- ອີງຕາມ ກົດໝາຍວ່າດ້ວຍ ວິສາຫະກິດສະບັບເລກທີ 11/ສພຊ, ລົງວັນທີ 09 ພະຈິກ 2005.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ, ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.

## ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ 1

## ຫລັກການທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດລະບຽບການ ແລະ ມາດຕະຖານ ກ່ຽວກັບການສ້າງຕັ້ງ, ການຈັດສັນ ແລະ ຄຸ້ມຄອງຕະຫຼາດ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ຊຸກຍູ້ການແລກປ່ຽນ, ຊື້-ຂາຍສິນຄ້າ ພາຍໃນຕະຫຼາດ, ຮັບປະກັນການສະໜອງສິນຄ້າທີ່ມີຄຸນນະພາບ, ຄວາມປອດໄພໃຫ້ແກ່ສັງຄົມ ແລະສິ່ງແວດລ້ອມ, ປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ບັນດາເຜົ່າໃຫ້ດີຂຶ້ນ.

**ມາດຕາ 2. ຕະຫຼາດ**

ຕະຫຼາດໃນຂໍ້ຕົກລົງສະບັບນີ້ ໝາຍເຖິງ ຕຶກອາຄານ ຫຼື ສະຖານທີ່ ທີ່ຖືກກຳນົດ, ພັດທະນາ ແລະ ນຳໃຊ້ໃຫ້ເປັນບ່ອນພົວພັນຊື້-ຂາຍ ແລະ ແລກ ປ່ຽນ ສິນຄ້າ ລະຫວ່າງບຸກຄົນ, ນິຕິບຸກຄົນ ດ້ວຍກັນ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. ການພັດທະນາຕະຫຼາດ ໝາຍເຖິງ ການປັບປຸງຕະຫຼາດໃຫ້ໄດ້ມາດຕະຖານ, ອຳນວຍຄວາມສະດວກໃຫ້ແກ່ ການພົວພັນຊື້-ຂາຍ ນັບແຕ່ສູນກາງລົງຮອດທ້ອງຖິ່ນ ໃຫ້ມີການຂະຫຍາຍຕົວ ແລະ ກາຍເປັນຕະຫຼາດທີ່ທັນສະໄໝ;

2. ຈັດສັນຕະຫຼາດ ໝາຍເຖິງ ການບໍລິຫານຈັດການ ການຈັດສະຖານທີ່, ຄວາມເປັນລະບຽບຮຽບຮ້ອຍ, ສຸຂະອານາໄມ, ການຮັກສາຄວາມປອດໄພ ການຮັກສາຄວາມສະຫງົບ ແລະ ການຈໍລະຈອນສິນຄ້າ ພາຍໃນຕະຫຼາດ;

3. ຄຸ້ມຄອງຕະຫຼາດ ໝາຍເຖິງ ການຕິດຕາມ, ກວດກາ ແລະ ແນະນຳ ກ່ຽວກັບການສ້າງຕັ້ງ ແລະ ການເຄື່ອນໄຫວພາຍໃນຕະຫຼາດ ໃຫ້ໄດ້ຕາມມາດຕະຖານ ແລະ ເງື່ອນໄຂຂອງຂໍ້ຕົກລົງສະບັບນີ້;

4. ຜູ້ບໍລິຫານຈັດການຕະຫຼາດ ໝາຍເຖິງ ເຈົ້າຂອງກິດຈະການ ຫຼື ຜູ້ດຳເນີນທຸລະກິດຕະຫຼາດໃຫ້ເຊົ່າ/ຊື້ ຫ້ອງ ຫຼື ຮ້ານຂາຍ.

**ມາດຕາ 4. ຫຼັກການພື້ນຖານການພັດທະນາຕະຫຼາດ**

ການພັດທະນາຕະຫຼາດຕ້ອງປະຕິບັດຕາມຫຼັກການພື້ນຖານຄື:

1. ແທດເໝາະກັບແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ, ຖືກຕ້ອງ ແລະ ສອດຄ່ອງກັບນະໂຍບາຍຂອງລັດຖະບານໃນການພັດທະນາຕະຫຼາດ;
2. ແທດເໝາະກັບບໍລິມາດສິນຄ້າ ທີ່ຈໍລະຈອນ ຢູ່ທ້ອງຖິ່ນ ຫຼື ເຂດນັ້ນໆ;
3. ສົ່ງເສີມຂະຫຍາຍຕະຫຼາດຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ, ເຂດພູດອຍ ຄຽງຄູ່ກັບການອານຸລັກຮີດຄອງປະເພນີ ແລະ ວັດທະນາທຳຂອງປະຊາຊົນບັນດາເຜົ່າ.

**ມາດຕາ 5. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ລວມທັງການຈັດຕັ້ງພາຍໃນ ແລະ ຕ່າງປະເທດທີ່ເຄື່ອນໄຫວທຸລະກິດກ່ຽວກັບຕະຫຼາດຢູ່ພາຍໃນ ສປປ ລາວ. ແຕ່ບໍ່ກວມເອົາ ບັນດາຫ້າງ, ຮ້ານຊຸບພະສິນຄ້າ ແລະ ສູນການຄ້າ ຊຶ່ງຈະໄດ້ກຳນົດໄວ້ໃນ ລະບຽບການສະເພາະ.

## ໝວດທີ 2
## ການສ້າງຕັ້ງ, ຂະໜາດ, ມາດຕະຖານ ແລະ ເງື່ອນໄຂກ່ຽວກັບຕະຫຼາດ

**ມາດຕາ 6. ການສ້າງຕັ້ງຕະຫຼາດ**

ການສ້າງຕັ້ງຕະຫຼາດ ແມ່ນການກໍ່ສ້າງຕຶກ, ອາຄານ ຫຼື ສະຖານທີ່ ເພື່ອເປັນບ່ອນພົວພັນຊື້-ຂາຍ ແລະ ແລກປ່ຽນສິນຄ້າ ໂດຍໄດ້ຮັບອະນຸຍາດ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.